ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===== xxxx ====------

ກະຊວງ ອຸດສາຫະກຳ ແລະການຄ້າ ເລກທີ 1785 /ອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ: 07 /9/ 2009.

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງທຸລະກິດ ນຳເຂົ້າ ແລະບໍລິການ ຂາຍຍົກ ນ້ຳມັນເຊື້ອໄຟ.

- ອີງຕາມ ກົດໝາຍອາຍາ, ສະບັບປັບປຸງ ເລກທີ 12 / ສພຊ, ລົງວັນທີ 10/11/05.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 205 / ນຍ, ລົງວັນທີ 10/10/01, ວ່າດ້ວຍການຄຸ້ມຄອງການນຳເຂົ້າ - ສົ່ງອອກສິນຄ້າ.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 206 / ນຍ, ລົງວັນທີ 10/10/01, ວ່າດ້ວຍທຸລະກິດຈຳໜ່າຍສິນຄ້າ.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 207/ ນຍ, ລົງວັນທີ 11/10/01, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ188/ ນຍ, ລົງວັນທີ17/08/ 2006, ວ່າດ້ວຍການຈັດຕັ້ງ ແລະ ການ ເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະການຄ້າ ອອກຂໍ້ຕົກລົງ:

## ໝວດທີ I
## ຫລັກການທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ວາງອອກ ເພື່ອກຳນົດຫລັກການ, ລະບຽບການ ແລະ ມາດຕະການຕ່າງໆ ໃນການເຄື່ອນໄຫວດຳເນີນທຸລະກິດ ນຳເຂົ້າ ແລະ ບໍລິການຂາຍຍົກ ນ້ຳມັນເຊື້ອໄຟຢູ່ ສປປລາວ, ແນໃສ່ຊຸກຍູ້ ແລະ ສົ່ງເສີມການດຳເນີນທຸລະກິດນ້ຳມັນເຊື້ອໄຟ ທີ່ມີການແຂ່ງຂັນ ບົນພື້ນຖານທີ່ຖືກຕ້ອງຕາມລະບຽບ, ກົດໝາຍພ້ອມທັງຈຳກັດ ແລະ ມີມາດຕະການຕໍ່ຜູ້ທີ່ລະເມີດ, ສວຍໂອກາດແນໃສ່ປົກປ້ອງຜົນປະໂຫຍດຂອງຊາດ, ຂອງຜູ້ຊົມໃຊ້ ແລະ ຜູ້ປະກອບການ ພ້ອມທັງໃຫ້ຜູ້ປະກອບການທຸລະກິດນ້ຳມັນເຊື້ອໄຟເຮັດໜ້າທີ່ບໍລິການຮັບໃຊ້ ສັງຄົມຢ່າງຕັ້ງໜ້າ, ປະກອບສ່ວນເຂົ້າໃນການພັດທະນາ ປະເທດຊາດ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ.

**ມາດຕາ 2. ອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

- ທຸລະກິດນ້ຳມັນເຊື້ອໄຟ ໝາຍເຖິງ ທຸລະກິດ ກ່ຽວກັບການນຳເຂົ້າ ແລະການບໍລິການຂາຍຍົກ ນ້ຳມັນເຊື້ອໄຟ;
- ຜູ້ດຳເນີນທຸລະກິດນ້ຳມັນເຊື້ອໄຟ ໝາຍເຖິງບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳເນີນທຸລະກິດກ່ຽວກັບການນຳເຂົ້ານ້ຳມັນເຊື້ອໄຟ, ປ້ຳບໍລິການຈຳໜ່າຍ ຫຼື ຕົວແທນຈຳໜ່າຍນ້ຳມັນເຊື້ອໄຟ;
- ນ້ຳມັນເຊື້ອໄຟ ໝາຍເຖິງ ນ້ຳມັນແອັດຊັງພິເສດ, ແອັດຊັງທຳມະດາ, ກາຊວນ ແລະອື່ນໆ;
- ປ້ຳ ຫລື ຕົວແທນຈຳໜ່າຍ ໝາຍເຖິງ ປ້ຳທີ່ບໍລິການຂາຍນ້ຳມັນເຊື້ອໄຟ ໃຫ້ແກ່ສັງຄົມທົ່ວໄປ;
- ລະບົບສາງບັນຈຸ ໝາຍເຖິງສາງເກັບມ້ຽນນ້ຳມັນເຊື້ອໄຟ ຂອງຫົວໜ່ວຍທຸລະກິດທີ່ນຳເຂົ້ານ້ຳມັນເຊື້ອໄຟ, ໂດຍມີມາດຖານເຕັກນິກຮອງຮັບສະເພາະ ເພື່ອບັນຈຸນ້ຳມັນເຊື້ອໄຟກຽມສະໜອງໃຫ້ແກ່ປ້ຳ ຫຼືຕົວແທນຈຳໜ່າຍ;
- ລະບົບຂົນສົ່ງ ໝາຍເຖິງ ການນຳເອົານ້ຳມັນອອກຈາກສາງບັນຈຸນ້ຳມັນເຊື້ອໄຟ ເພື່ອໄປສົ່ງຕາມປ້ຳ ຫຼືຕົວແທນຈຳໜ່າຍຂອງຕົນ ທີ່ເຮັດໜ້າທີ່ບໍລິການຂາຍໃຫ້ແກ່ສັງຄົມ;
- ເຄື່ອງໝາຍ ໝາຍເຖິງ ຍີ່ຫໍ້ ຫຼືສັນຍາລັກຂອງບໍລິສັດຜູ້ນຳເຂົ້ານ້ຳມັນເຊື້ອໄຟ ຕາມທີ່ໄດ້ຈົດທະບຽນເຄື່ອງໝາຍການຄ້າຈາກອົງການທີ່ກ່ຽວຂ້ອງ.

**ມາດຕາ 3. ຫຼັກການພື້ນຖານຂອງການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດນ້ຳມັນເຊື້ອໄຟ**

ນ້ຳມັນເຊື້ອໄຟເປັນສິນຄ້າຍຸດທະສາດທີ່ລັດຄວບຄຸມ, ເປັນປັດໃຈພື້ນຖານໃຫ້ແກ່ການຜະລິດ ການພັດທະນາພື້ນຖານໂຄງລ່າງ ແລະເສດຖະກິດຂອງຊາດໂດຍລວມ, ຊຶ່ງຈຳເປັນຕ້ອງມີການຄຸ້ມຄອງ ແລະດັດສົມຂອງລັດ ບົນພື້ນຖານກົນໄກເສດຖະກິດຕະຫຼາດ. ສະນັ້ນ, ການສ້າງຕັ້ງ ແລະ ການເຄື່ອນໄຫວດຳເນີນທຸລະກິດກ່ຽວກັບນ້ຳມັນເຊື້ອໄຟຢູ່ ສປປລາວ ຕ້ອງປະຕິບັດຢ່າງເຂັ້ມງວດ ຕາມຂໍ້ຕົກລົງສະບັບນີ້ ແລະລະບຽບກົດໝາຍອື່ນໆ ທີ່ກ່ຽວຂ້ອງ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 4. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ວາງອອກ ເພື່ອນຳໃຊ້ຕໍ່ບຸກຄົນ ຫຼື ນິຕິບຸກຄົນ ນັບທັງພາຍໃນ ແລະຕ່າງປະເທດທີ່ມີຈຸດປະສົງ ເຄື່ອນໄຫວດຳເນີນທຸລະກິດກ່ຽວກັບນ້ຳມັນເຊື້ອໄຟ ຢູ່ ສປປ ລາວ

## ໝວດທີ II

## ມາດຖານ ແລະເງື່ອນໄຂໃນການສ້າງຕັ້ງ ແລະການເຄື່ອນໄຫວ ດຳເນີນທຸລະກິດ ນຳເຂົ້າ ແລະບໍລິການຂາຍຍົກ ຂອງຫົວໜ່ວຍທຸລະກິດນຳເຂົ້າ ນ້ຳມັນເຊື້ອໄຟ

**ມາດຕາ 5. ເງື່ອນໄຂໃນການສ້າງຕັ້ງ**

ບຸກຄົນ ຫຼືນິຕິບຸກຄົນ ທີ່ມີຈຸດປະສົງຢາກສ້າງຕັ້ງ ແລະ ເຄື່ອນໄຫວດຳເນີນທຸລະກິດນຳເຂົ້າ ແລະບໍລິການຂາຍຍົກນ້ຳມັນເຊື້ອໄຟ ຢູ່ ສປປລາວ ຕ້ອງມີມາດຖານ ແລະເງື່ອນໄຂດັ່ງນີ້:

5.1. ມີທຶນຈົດທະບຽນຢ່າງຕ່ຳ 10 ຕື້ກີບຂຶ້ນໄປ ເພື່ອສ້າງພື້ນຖານໂຄງລ່າງວັດຖຸເຕັກນິກ ສຳລັບຮອງຮັບດ້ານນີ້;

5.2. ມີເງື່ອນໄຂສ້າງລະບົບສາງ ທີ່ໄດ້ມາດຕະຖານ ແລະ ສາມາດບັນຈຸນ້ຳມັນໄດ້ 1 ລ້ານລິດຂຶ້ນໄປເປັນຂອງຕົນເອງ, ລະບົບສາງ ຕ້ອງຮັບປະກັນຄວາມປອດໄພ ໃຫ້ໄດ້ຕາມມາດຕະຖານຂອງຂະແໜງການທີ່ກ່ຽວຂ້ອງ;

5.3. ມີເຄື່ອງໝາຍການຄ້າ (ໂລໂກ້) ເປັນຕົວແທນຈຳໜ່າຍນ້ຳມັນເຊື້ອໄຟຍີ່ຫໍ້ໃດໜຶ່ງ, ຊຶ່ງໄດ້ຜ່ານການອະນຸຍາດຈົດທະບຽນຢ່າງຖືກຕ້ອງ ຈາກອົງການ ວິທະຍາສາດ ແລະເຕັກໂນໂລຊີແຫ່ງຊາດ;

5.4. ມີພາຫະນະຂົນສົ່ງນ້ຳມັນເຊື້ອໄຟທີ່ໄດ້ຕາມມາດຕະຖານເຕັກນິກຂອງຂະແໜງການທີ່ກ່ຽວຂ້ອງຢ່າງໜ້ອຍ 05 ຄັນ, ນອກຈາກນີ້ ຖ້າຕ້ອງການເພີ່ມເຕີມ ກໍສາມາດເຊົ່າໄດ້, ແຕ່ຕ້ອງເຊົ່າຈາກຫົວໜ່ວຍທຸກິດ ຫຼືບຸກຄົນ ທີ່ດຳເນີນທຸລະກິດດ້ານການບໍລິການຂົນສົ່ງທີ່ຖືກຕ້ອງຕາມກົດໝາຍ;

5.5. ມີປ້ຳ ຫຼືຕົວແທນຈຳໜ່າຍນ້ຳມັນເຊື້ອໄຟ ຕາມຍີ່ຫໍ້ຂອງຕົນທີ່ໄດ້ຮັບລິຂະສິດ, ຊຶ່ງສາມາດຮອງຮັບ ປະລິມານນ້ຳມັນ ແລະ ຕ້ອງຖືກຕາມມາດຕະຖານເຕັກນິກ ທີ່ວາງອອກ;

5.6. ຕ້ອງເປັນສະມາຊິກ ຂອງກຸ່ມນ້ຳມັນເຊື້ອໄຟ ພາຍຫຼັງທີ່ໄດ້ສ້າງຕັ້ງແລ້ວ;

5.7. ຜູ້ທີ່ມີຈຸດປະສົງຢາກສ້າງຕັ້ງ ແລະດຳເນີນທຸລະກິດ ດັ່ງກ່າວນີ້ ຕ້ອງມີລະດັບຄວາມຮູ້, ຄວາມສາມາດ ຫຼື ມີປະສົບການທີ່ພຽງພໍ ກ່ຽວກັບການດຳເນີນທຸລະກິດນ້ຳມັນໃນດ້ານນີ້ ແລະໃນກໍລະນີບໍ່ມີແມ່ນຕ້ອງໄດ້ຈ້າງວິຊາການຈຳນວນໜຶ່ງທີ່ເປັນທີ່ປຶກສາ.

**ມາດຕາ 6. ການຂໍອະນຸຍາດສ້າງຕັ້ງ**

ຜູ້ທີ່ມີຈຸດປະສົງຢາກສ້າງຕັ້ງຫົວໜ່ວຍທຸລະກິດນຳເຂົ້ານ້ຳມັນເຊື້ອໄຟ, ກ່ອນອື່ນຕ້ອງສະເໜີເຖິງກະຊວງອຸດສາຫະກຳ ແລະ ການຄ້າ, (ກົມການຄ້າພາຍໃນ) ເພື່ອພິຈາລະນາ ແລະ ຮັບຮອງທາງດ້ານເງື່ອນໄຂຕາມທີ່ຂໍ້ຕົກລົງວາງອອກ, ຈາກນັ້ນ, ຈຶ່ງລົງເບິ່ງສະຖານທີ່ຈະສ້າງຕັ້ງຫ້ອງການ, ສາງເກັບມ້ຽນນ້ຳມັນ, ປ້ຳຫຼືຕົວແທນຈຳໜ່າຍ ໂດຍຮ່ວມກັນກັບພາກສ່ວນທີ່ກ່ຽວຂ້ອງ ເມື່ອເຫັນວ່າຖືກຕ້ອງ ຕາມມາດຕະຖານແລ້ວຈຶ່ງສົ່ງ ໃຫ້ເຈົ້າໜ້າທີ່ ທະບຽນວິສາຫະກິດ ເພື່ອຂຶ້ນ ທະບຽນວິສາຫະກິດໃຫ້ຕາມລະບຽບການ.

**ມາດຕາ 7. ເງື່ອນໄຂໃນການດຳເນີນທຸລະກິດ**

ທຸກຫົວໜ່ວຍທຸລະກິດ ທີ່ດຳເນີນທຸລະກິດກ່ຽວກັບການນຳເຂົ້າ ແລະ ບໍລິການຂາຍຍົກນ້ຳມັນເຊື້ອໄຟຕ້ອງປະຕິບັດ ຕາມເງື່ອນໄຂດັ່ງນີ້:

7.1. ມີແຜນການນຳເຂົ້າ, ມີແຜນການຈຳໜ່າຍ ແລະ ການຕະຫຼາດທີ່ແນ່ນອນ, ຊຶ່ງນຳເຂົ້າເປັນງວດ ແລະ ປີໂດຍມີການອະນຸມັດຈາກກະຊວງອຸດສາຫະກຳ ແລະ ການຄ້າ, (ກົມການນຳເຂົ້າ ແລະສົ່ງອອກ) ບົນພື້ນຖານຜ່ານການຢັ້ງຢືນຈາກ ກົມການຄ້າພາຍໃນ ກ່ຽວກັບພື້ນຖານໂຄງລ່າງ ແລະການເຄື່ອນໄຫວດຳເນີນທຸລະກິດ;

7.2. ມີບັນຊີເງິນຝາກຢູ່ ທະນາຄານ ທີ່ຕັ້ງຢູ່ ສ ປປ ລາວ;

7.3 ນ້ຳມັນເຊື້ອໄຟ ທີ່ບໍລິສັດນຳເຂົ້າໃນແຕ່ລະຄັ້ງ ຕ້ອງໄດ້ມາດຕະຖານຄຸນນະພາບ ແລະ ຖືກຕາມລະບຽບການຂອງອົງການ ວິທະຍາສາດ ແລະເທັກໂນໂລຊີແຫ່ງຊາດ;

7.4 ການນຳເຂົ້າຕ້ອງນຳເຂົ້າ ຕາມດ່ານຊາຍແດນທີ່ໄດ້ຮັບອະນຸຍາດເທົ່ານັ້ນ ແລະ ມີສາງນ້ຳມັນຂອງຕົນຕັ້ງຢູ່ແຂວງນັ້ນ;

7.5 ການຊຳລະສະສາງຕ້ອງຜ່ານທະນາຄານ ທີ່ຕັ້ງຢູ່ ສປປ ລາວ;

7.6 ປະຕິບັດລາຄາຂາຍຍົກ-ຂາຍຍ່ອຍ ຕາມທີ່ລັດກຳນົດໃນແຕ່ລະໄລຍະ ພ້ອມທັງຄຸ້ມຄອງປ້ຳ ຫຼື ຕົວແທນຈຳໜ່າຍຂອງຕົນ ໃຫ້ປະຕິບັດລາຄາຂາຍຍ່ອຍ ແລະ ກຳນົດເວລາຕາມການຊີ້ນຳ ຂອງ ອົງການທີ່ກ່ຽວຂ້ອງຢ່າງເຂັ້ມງວດ;

7.8 ຮັບປະກັນໃຫ້ມີນ້ຳມັນສຳຮອງໄວ້ ໃນກໍລະນີສຸກເສີນໃຫ້ໄດ້ຢ່າງໜ້ອຍ 10 - 15 ວັນ ເພື່ອສະໜອງໃຫ້ແກ່ ປ້ຳ ຫຼືຕົວແທນຈຳໜ່າຍຂອງຕົນ;

7.9 ຂະຫຍາຍປ້ຳ ຫຼືຕົວແທນຈຳໜ່າຍ ຂອງຕົນອອກສູ່ເຂດຫ່າງໄກສອກຫຼີກ;

7.10 ປະຕິບັດຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງໃນການດຳເນີນທຸລະກິດ.

## ໝວດທີ III
## ສິດ, ໜ້າທີ່ ແລະ ພັນທະ ຂອງຫົວໜ່ວຍທຸລະກິດນຳເຂົ້າ ແລະບໍລິການຂາຍຍົກນ້ຳມັນເຊື້ອໄຟ

### ມາດຕາ 8. ສິດ, ໜ້າທີ່ຂອງຫົວໜ່ວຍທຸລະກິດນຳເຂົ້າ ແລະບໍລິການຂາຍຍົກ ນ້ຳມັນເຊື້ອໄຟ

8.1 ກຳນົດ ຫຼັກການ, ວິທີການ ຫຼືລະບຽບການ ກ່ຽວກັບການຄຸ້ມຄອງປ້ຳ ຫຼືຕົວແທນຈຳໜ່າຍຂອງຕົນບົນພື້ນຖານທີ່ຖືກຕ້ອງຕາມລະບຽບການສະບັບນີ້ ແລະລະບຽບ, ກົດໝາຍອື່ນໆທີ່ກ່ຽວ ຂ້ອງ;

8.2 ກວດກາເງື່ອນໄຂ ທາງດ້ານເຕັກນິກ ແລະ ໃຫ້ຄຳແນະນຳ ທີ່ຈຳເປັນທາງດ້ານວິຊາການຕ່າງໆແກ່ປ້ຳ ຫຼືຕົວແທນຈຳໜ່າຍຂອງຕົນ, ເພື່ອຮັບປະກັນ ກ່ຽວກັບມາດຕະຖານ, ຄຸນນະພາບຂອງນ້ຳມັນ ພ້ອມທັງການບໍລິການ ແລະ ການຈຳໜ່າຍໃຫ້ຄ່ອງແຄ້ວ, ວ່ອງໄວສະດວກແກ່ຜູ້ຊົມໃຊ້;

8.3 ກວດກາ ການເຄື່ອນໄຫວດຳເນີນທຸລະກິດຂອງປ້ຳ ຫຼື ຕົວແທນຈຳໜ່າຍຂອງຕົນ ເປັນແຕ່ລະໄລຍະບົນພື້ນຖານສັນຍາ ທີ່ໄດ້ຕົກລົງເຊັນກັນ ແລະ ຕາມລະບຽບການຄຸ້ມຄອງປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟໃນ ສປປລາວ;

8.4 ແນະນຳພ້ອມທັງຕິດຕາມ ແລະກວດກາ ການຈັດຕັ້ງປະຕິບັດ ລາຄາຂາຍຍ່ອຍ ແລະກຳນົດເວລາຕາມທິດຊີ້ນຳຂອງຂັ້ນເທິງໃນແຕ່ລະໄລຍະ ເພື່ອຫຼີກເວັ້ນບໍ່ໃຫ້ຜູ້ປະກອບການ ປ້ຳບໍລິການສວຍໂອກາດເອົາລັດ, ເອົາປຽບ ສັງຄົມກໍ່ຄືຜູ້ຊົມໃຊ້;

8.5 ປະຕິບັດວິໄນ ທາງດ້ານບໍລິຫານ ແລະເສດຖະກິດຕໍ່ ປ້ຳ ຫຼືຕົວແທນຈຳໜ່າຍຂອງຕົນ ໃນກໍລະນີທີ່ບໍ່ປະຕິບັດຕາມສັນຍາ ທີ່ໄດ້ຕົກລົງເຊັນກັນນັ້ນ;

8.6 ປະຕິບັດສິດ ແລະໜ້າທີ່ອື່ນໆຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 9. ພັນທະຂອງຫົວໜ່ວຍທຸລະກິດນຳເຂົ້າ ແລະບໍລິການຂາຍຍົກ ນ້ຳມັນເຊື້ອໄຟ

9.1 ຮັບປະກັນ ການສະໜອງນ້ຳມັນໃຫ້ປ້ຳ ຫຼື ຕົວແທນຈຳໜ່າຍຂອງຕົນ ໃຫ້ພຽງພໍ ແລະ ເປັນປົກກະຕິ, ຫ້າມບໍ່ໃຫ້ກັກຕຸນ ຫຼື ຮ່ວມກັນກັກຕຸນ ໃນທຸກຮູບແບບ;

9.2 ກວດກາ ແລະ ຄຸ້ມຄອງ ຄຸນນະພາບນ້ຳມັນເຊື້ອໄຟຂອງປ້ຳ ຫຼື ຕົວແທນຈຳໜ່າຍຂອງຕົນຢ່າງເປັນປົກກະຕິ ເພື່ອຮັບປະກັນໃຫ້ໄດ້ຕາມຫຍີ່ຫໍ້ ແລະ ມາດຕະຖານຄຸນນະພາບ ນ້ຳມັນຂອງບໍລິສັດຕົນທີ່ໄດ້ຜ່ານການຮັບຮອງຈາກອົງການທີ່ກ່ຽວຂ້ອງ;

9.3 ປະຕິບັດພັນທະຕໍ່ງົບປະມານ (ພາສີ - ອາກອນ ຕາມລະບົບ) ຢ່າງຄົບຖ້ວນ;

9.4 ມີບັນຊີ ຕິດຕາມການຈຳໜ່າຍນ້ຳມັນໃຫ້ແຕ່ລະປ້ຳ ຫຼື ຕົວແທນຈຳໜ່າຍຂອງຕົນຢ່າງລະອຽດ ແລະເປັນລະບົບ;

9.5 ຕິດເຄື່ອງໝາຍການຄ້າຂອງບໍລິສັດຕົນຕາມປ້ຳ ຫຼື ຕົວແທນຈຳໜ່າຍຢ່າງຊັດເຈນ ເພື່ອໃຫ້ເຫັນໄດ້ງ່າຍ;

9.6 ປ້ຳຂາຍຍ່ອຍປ້ຳໜຶ່ງມີສິດເປັນຕົວແທນຈຳໜ່າຍນ້ຳມັນເຊື້ອໄຟໄດ້ພຽງຍີ່ຫໍ້ໃດໜຶ່ງເທົ່ານັ້ນ;

9.7 ມີເຄື່ອງກວດກາຄຸນນະພາບນ້ຳມັນເຊື້ອໄຟ ຫຼືເຄື່ອງຊັ່ງຜອງຢ່າງໜ້ອຍ ໜຶ່ງເຄື່ອງປະຈຳຢູ່ບໍລິສັດຂອງຕົນເອງ;

9.8 ປະຕິບັດລະບົບ ການລາຍງານນ້ຳມັນ ທີ່ຄ້າງສາງ ເປັນປະຈຳອາທິດ, ເດືອນ, ງວດ, ປີ ແລະ ລາຄານຳເຂົ້າ (CIF) ແລະລາຄາຂາຍຍົກ-ຂາຍຍ່ອຍ ຢ່າງເປັນລະບົບ ແລະ ປົກກະຕິໃຫ້ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະການຄ້າ;

9.9 ປະຕິບັດລະບົບການລາຍງານຂໍ້ມູນຕ່າງໆ ຫຼື ໃຫ້ການຮ່ວມມື ກັບອົງການຄຸ້ມຄອງມະຫາພາກໃນການສະໜອງ ຂໍ້ມູນຕ່າງໆໄດ້ຢ່າງເປັນລະບົບ.

9.10 ສະໜອງນ້ຳມັນ ໃຫ້ແກ່ໂຄງການບູລິມະສິດຕ່າງໆ, ໂດຍມີສັນຍາ ເປັນລາຍລັກອັກສອນ ແລະ ປະຕິບັດຕາມສັນຍານັ້ນໆຢ່າງເຂັ້ມງວດ;

9.11 ຮັບຜິດຊອບຕໍ່ໜ້າກົດໝາຍ ຕໍ່ການກະທຳຜິດຂອງປ້ຳ ຫຼື ຕົວແທນຈຳໜ່າຍຂອງຕົນ.

**ມາດຕາ 10. ບາງມາດຕະການ ຕໍ່ຫົວໜ່ວຍທຸລະກິດ ນຳເຂົ້າ ແລະຈຳໜ່າຍ ນ້ຳມັນເຊື້ອໄຟ**

ຖ້າຫົວໜ່ວຍທຸລະກິດ ຜູ້ນຳເຂົ້າ ແລະບໍລິການຂາຍຍົກ ນ້ຳມັນເຊື້ອໄຟ ຫາກລະເມີດລະບຽບການ ແລະກົດໝາຍ ດັ່ງຕໍ່ໄປນີ້ ເຊັ່ນ:

**10.1 ຕໍ່ການສວຍໂອກາດຂຶ້ນລາຄານ້ຳມັນ**

ຫົວໜ່ວຍທຸລະກິດຜູ້ນຳເຂົ້ານ້ຳມັນເຊື້ອໄຟ ຫາກໄດ້ຮ່ວມກັບປ້ຳຂາຍຍ່ອຍ ຫຼື ຕົວແທນຈຳໜ່າຍຂອງຕົນສວຍໂອກາດຂຶ້ນລາຄາ ຫຼືຂາຍເກີນລາຄາ ທີ່ລັດກຳນົດໃນແຕ່ລະໄລຍະ ຫຼື ໃນເມື່ອເກີດມີເຫດສຸກເສີນຕ່າງໆ ໃນທ້ອງຖິ່ນ ຫຼືເຂດໃດໜຶ່ງ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ 6 ເດືອນ ຫາ 2 ປີ ແລະຈະຖືກປັບໃໝ ແຕ່ **1.000.000 ກີບ** ຫາ **5.000.000 ກີບ** ຕໍ່ ຄັ້ງ (ຕາມມາດຕາ 147 ຂອງກົດໝາຍອາຍາ).

**10.2 ຕໍ່ການກັກຕຸນນ້ຳມັນ**

ຫົວໜ່ວຍທຸລະກິດ ຜູ້ນຳເຂົ້ານ້ຳມັນເຊື້ອໄຟ ຫາກໄດ້ຊຸກເຊື່ອງນ້ຳມັນ ໃນຖັງບັນຈຸຂອງປ້ຳ ຫຼືໃນສາງເກັບມ້ຽນ ເພື່ອຫວັງຜົນກຳໄລ ຫຼື ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ສັງຄົມ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ 1ປີ ຫາ 4ປີ ແລະຈະຖືກປັບໃໝຕາມລະບຽບການຂອງພາສີ (ຕາມມາດຕາ 148 ຂອງກົດໝາຍອາຍາ).

**10.3 ການຂາຍນ້ຳມັນ ໂດຍບໍ່ຖືກຕາມລະບຽບ, ກົດໝາຍ**

1.) ຫົວໜ່ວຍທຸລະກິດຜູ້ນຳເຂົ້ານ້ຳມັນເຊື້ອໄຟ ຕ້ອງຈຳໜ່າຍນ້ຳມັນໃຫ້ແກ່ປ້ຳ ຫຼືຕົວແທນຈຳໜ່າຍຂອງຕົນເທົ່ານັ້ນ; ຫ້າມ ແລະຈ່າວຂາຍນ້ຳມັນໃຫ້ແກ່ປ້ຳ ຫຼືຕົວແທນຂອງບໍລິສັດອື່ນ;

2.) ຕ້ອງປະຕິບັດລາຄາຂາຍ ຕາມທີ່ລັດກຳນົດ ໃນແຕ່ລະໄລຍະ ຢ່າງເຂັ້ມງວດ;

3.) ກ່ອນລາຄານ້ຳມັນຈະຂຶ້ນ ຫຼື ລົງບໍລິສັດຜູ້ນຳເຂົ້າ\ຕ້ອງແຈ້ງໃຫ້ລູກຄ້າ (ປ້ຳ ຫຼື ຕົວແທນຈຳໜ່າຍ) ຂອງຕົນຮູ້ ພ້ອມທັງໃຫ້ຄວາມຮ່ວມມື ແກ່ເຈົ້າໜ້າທີ່ຂອງລັດ ໃນການກວດການ້ຳມັນທີ່ຍັງຄ້າງ ຢູ່ໃນສາງ ຫຼືຖັງບັນຈຸຂອງປ້ຳຂາຍຍ່ອຍ ເພື່ອໄລ່ລຽງຕາມລະບຽບການ;

4.) ຖ້າຫາກມີການຝ່າຝືນ ບໍລິສັດຜູ້ນຳເຂົ້າ ຈະຖືກລົງໂທດ ຕັດອິດສະຫຼະພາບແຕ່ 6ເດືອນ ຫາ 2ປີ ແລະຈະຖືກປັບໃໝເປັນເງິນ 1.000.000 ກີບ ຫາ 10.000.000 ກີບ (ຕາມມາດຕາ 149 ຂອງກົດໝາຍອາຍາ).

10.4 ທຸກໆຫົວໜ່ວຍທຸລະກິດ ທີ່ນຳເຂົ້ານ້ຳມັນເຊື້ອໄຟ ຕ້ອງໄດ້ປະຕິບັດຕາມຂໍ້ກຳນົດສະບັບນີ້ຢ່າງເຂັ້ມງວດ ແລະ ຜູ້ທີ່ດຳເນີນທຸລະກິດທີ່ບໍ່ຖືກຕ້ອງ, ບໍ່ປະຕິບັດຕາມເງື່ອນໄຂຂອງຂໍ້ຕົກລົງສະບັບນີ້ ນອກຈາກບັນດາມາດຕະການ ທີ່ໄດ້ກ່າວມາຂ້າງເທິງນີ້ ຍັງຈະໄດ້ປະຕິບັດມາດຕະການຕ່າງໆດັ່ງນີ້:

1.) ຈຳກັດໂອກາດ ໃນການພິຈາລະນາ ໃຫ້ເປີດປ້ຳ ຫຼືຕົວແທນຈຳໜ່າຍ;

2.) ໂຈະການເຄື່ອນໄຫວຊົ່ວຄາວ ຫຼືສັ່ງໃຫ້ຍຸບເລີກ ຖ້າຫາກ ມີກໍລະນີຮ້າຍແຮງ;

3.) ຫຼຸດຕົວເລກການນຳເຂົ້ານ້ຳມັນເຊື້ອໄຟ ໃນແຕ່ລະງວດ ຫຼື ປີ;

4.) ຈັດເຂົ້າຢູ່ໃນບັນຊີ ຫົວໜ່ວຍທຸລະກິດ ທີ່ປະພຶດບໍ່ດີ ໃນການເຄື່ອນໄຫວທຸລະກິດ;

5.) ປະຕິບັດມາດຕະການອື່ນໆ ຕາມລະບຽບ, ກົດໝາຍ ທີ່ກ່ຽວຂ້ອງ.

## ໝວດທີ IV
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະມາດຕະການຕໍ່ຜູ້ທີ່ລະເມີດ

### ມາດຕາ 11. ນະໂຍບາຍ ຕໍ່ຜູ້ທີ່ມີຜົນງານ

ຜູ້ທີ່ເຄື່ອນໄຫວດຳເນີນທຸລະກິດ ກ່ຽວກັບນ້ຳມັນເຊື້ອໄຟ ຢ່າງຖືກຕ້ອງ ຕາມຂໍ້ຕົກລົງສະບັບນີ້ ກໍ່ຄື ລະບຽບການອື່ນໆ ທີ່ກ່ຽວຂ້ອງ ນອກຈາກຈະໄດ້ຮັບການຍ້ອງຍໍ ຈາກທາງພາກລັດ ແລະສັງຄົມທົ່ວໄປແລ້ວຍັງຈະ ໄດ້ຮັບສິດຜົນປະໂຫຍດຕ່າງໆດັ່ງນີ້:

1. ຈະໄດ້ຮັບບູລິມະສິດໃນການພິຈາລະນາກ່ຽວກັບນະໂຍບາຍຕ່າງໆ ໃນການດຳເນີນທຸລະກິດ;
2. ຈະໄດ້ຮັບການແບ່ງປັນຕົວເລກນ້ຳມັນຢ່າງເໝາະສົມໃນແຕ່ລະງວດ ຫຼືປີ;
3. ຈະໄດ້ຖືກຈັດເຂົ້າຢູ່ ໃນບັນຊີຫົວໜ່ວຍທຸລະກິດ ທີ່ດີເດັ່ນ ແລະສະເໜີການຍ້ອງຍໍ ຜ່ານທາງສື່ມວນຊົນ;
4. ຈະໄດ້ຮັບການຍ້ອງຍໍໃນຮູບການຕ່າງໆທີ່ເໝາະສົມ.

### ມາດຕາ 12. ມາດຕະການຕໍ່ຜູ້ລະເມີດ

ຜູ້ດຳເນີນທຸລະກິດ ທີ່ບໍ່ຖືກຕ້ອງ, ບໍ່ປະຕິບັດ
ຕາມເງື່ອນໄຂຂອງຂໍ້ຕົກລົງສະບັບນີ້ອາງອອກຈະມີມາດຕະ ການ ດັ່ງນີ້ :

1. ຫຼຸດຕົວເລກການນຳເຂົ້ານ້ຳມັນເຊື້ອໄຟໃນແຕ່ລະງວດ ຫຼືປີ;
2. ຈຳກັດໂອກາດໃນການພິຈາລະນາໃຫ້ເປີດປ້ຳ ຫຼືຕົວແທນຈຳໜ່າຍ;
3. ຈັດເຂົ້າຢູ່ ໃນບັນຊີຫົວໜ່ວຍທຸລະກິດ ທີ່ປະພຶດບໍ່ດີ ໃນການເຄື່ອນໄຫວທຸລະກິດ;
4. ໂຈະການເຄື່ອນໄຫວຊົ່ວຄາວ ຫຼືສັ່ງໃຫ້ຍຸບເລີກ ຖ້າຫາກມີກໍລະນີຮ້າຍແຮງ;

5. ປະຕິບັດຕາມມາດຕະການອື່ນໆຕາມລະບຽບກົດໝາຍ.

**ມາດຕາ 13. ການລະເມີດອື່ນໆ**

ບຸກຄົນ ຫຼືນິຕິບຸກຄົນ ທີ່ດຳເນີນທຸລະກິດນ້ຳມັນເຊື້ອໄຟ ຫາກລະເມີດຕໍ່ຂໍ້ກຳນົດສະບັບນີ້ ຫາກໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ສ້າງຂຶ້ນ, ໃນກໍລະນີການລະເມີດຫາກເປັນການກະທຳຜິດ ທາງອາຍາ ຜູ້ລະເມີດຈະຖືກລົງໂທດຕາມກົດໝາຍອາຍາ.

**ມາດຕາ 14. ມາດຕະການຕໍ່ລັດຖະກອນ ທີ່ ກະທຳຜິດຕໍ່ໜ້າທີ່ຮັບຜິດຊອບ**

ລັດຖະກອນ ທີ່ກົດໜ່ວງ ຫຼື ລະເມີດ ຕໍ່ຂໍ້ກຳນົດສະບັບນີ້ ຈະຖືກປະຕິບັດວິໃນເຊັ່ນ: ສຶກສາອົບຮົມ, ຍົກ ຍ້າຍໜ້າທີ່, ປົດຕຳແໜ່ງ ຫຼື ໄລ່ອອກຈາກ ລັດຖະກອນ, ນອກຈາກນີ້ ຍັງຈະໄດ້ປະຕິບັດ ມາດຕະການ ຕ່າງໆທີ່ໄດ້ລະບຸ ໃນໝວດທີ່ 8 ຂອງກົດໝາຍອາຍາ ຕາມແຕ່ລະກໍລະນີ ແລະຕາມລະບຽບກົດໝາຍອື່ນໆ ທີ່ກ່ຽວຂ້ອງ.

## ໝວດທີ V
## ການຈັດຕັ້ງປະຕິບັດ

**ມາດຕາ 15. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມການຄ້າພາຍໃນ, ກົມການນຳເຂົ້າ ແລະສົ່ງອອກ, ພະແນກອຸດສາຫະກຳ ແລະການຄ້າ ຂັ້ນ ແຂວງ ແລະນະຄອນຫຼວງ ປະສານກັບ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ແລະຜັນຂະຫຍາຍຂໍ້ຕົກລົງ ສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 16. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະປ່ຽນແທນ ຂໍ້ຕົກລົງ ສະບັບເລກທີ1331/ ກຄ, ລົງວັນທີ 28 /12 /2005, ວ່າດ້ວຍການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ.

**ລັດຖະມົນຕີວ່າການ**
**ກະຊວງ ອຸດສາຫະກຳ ແລະການຄ້າ,**
**ດຣ. ນາມ ວິຍາເກດ**